ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: 030 9882809,ແຟັກ:(856-21)

ເລກທີ: 112 /ລອທ

ນະຄອນຫຼວງວຽງຈັນ, 19 AUG 2026

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອໍານວຍການໃຫຍ່ຕະຫຼາດຫລັກຊັບລາວ ຈໍາກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສໍາຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 03 ປະຈໍາປີ 2026

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ("ບໍລິສັດ" ຫຼື "ລອທ") ໄດ້ຈັດກອງປະຊຸມສະພາບໍລິຫານ ຄັ້ງທີ 03 ປະຈໍາປີ 2026 ຈັດຂຶ້ນໃນວັນທີ 18 ສິງຫາ 2026 ເວລາ 10:00 ໂມງ ຢູ່ທີ່ສໍານັກງານໃຫຍ່ ບໍລິສັດ ລາວອາໂກຣເທັກ ມະຫາຊົນ, ຖະໜົນ 13 ເໜືອ, ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ໃຫ້ກຽດເປັນປະທານໂດຍ ທ່ານ ອະພິສິດ ຣຸຈິກຽດກໍາຈອນ ປະທານສະພາບໍລິຫານ.

<u>ລາຍຊື່ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ</u>

1.	ທ່ານ ອະພິສິດ	ຣຸຈິກຽດກໍາຈອນ	ປະທານສະພາບໍລິຫານ
2.	ທ່ານ ນາງ ຄໍາແພງ	ພັດທະດາວົງ	ຮອງປະທານສະພາບໍລິຫານ
3.	ທ່ານ ເສດ	ພັດທະນະມາດ	ສະມາຊິກສະພາບໍລິຫານ/ຜູ້ອໍານວຍການ
4.	ທ່ານ ພົງຖານ	ພິດຈໍານົງ	ສະມາຊິກສະພາບໍລິຫານ
5.	ທ່ານ ນາງ ດວງສະໄໝ	ເລົ່າຝົງ	ສະມາຊິກສະພາບໍລິຫານ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ສະໄໝສາມັນ ຄັ້ງທີ 03 ປະຈຳປີ 2026 ໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ມະຕິເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານ ຄັ້ງທີ່ 02 ປະຈຳປີ 2026.
2. ມະຕິເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ແລະ ບົດລາຍງານການເງິນຂອງບໍລິສັດ ສຳລັບໄລຍະ 06 ເດືອນຕົ້ນປີ 2026.

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ປອ. ເສດ ພັດທະນະມາດ